# ແຜນການສອນ
# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 25 ມີນາ 2007 ( 03-25-2007 )

---

## <u>ພຣະເຢຊູຊົງປົວແປງຊີວິດຂອງພວກເຮົາ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ໂຢຮັນ 11:1,3,6-7, 20-27, 38-40, 43-44

**<u>ຄວາມຈິງໃນພຣະຄັມພີ:</u>** ເຖິງແມ່ນວ່າຈະຢູ່ໃນເວລາເຫດການທີ່ເກີດຂຶ້ນທີ່ຄິດວ່າໝົດຫວັງແລ້ວແລະຖານທີ່ປ່ຽນແປງໄປໃນທາງກົງກັນຂ້າມ, ພຣະເຢຊູມີຄວາມສາມາດທີ່ຈະຊ່ອຍມະນຸດໃຫ້ຜ່ານຜ່າກັບສະພາວະທີ່ຮ້າຍແຮງ ແລະເຮັດໃຫ້ມີຄວາມຫວັງຂຶ້ນໃໝ່ໄດ້.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ແມ່ນເພື່ອຊ່ອຍເຫລືອທ່ານໃຫ້ໄດ້ຄົ້ນພົບວ່າພຣະເຢຊູໃຫ້ເຮັດສິ່ງໃດແດ່ເພື່ອພວກເຮົາໂດຍການ:

- ຍອມຮັບສາຣະພາບທີ່ພຣະເຢຊູຊົງເປັນຜູ້ໄດ້ຟື້ນພຣະຊົນແລ້ວ ແລະເປັນຊີວິດ ແລະ
- ຕັດສິນໃຈທີ່ຈະເຊື່ອ ແລະໄວ້ວາງໃຈພຣະອົງໃນເຫດການທີ່ເກີດຂຶ້ນ ແລະຄິດວ່າໝົດຫວັງແລ້ວ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>**ແຜນການສອນ**</u>", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

## <u>ບົດນຳ</u>:

1. **ເລົ່າເຣື່ອງ:** ແມ່ ແລະພໍ່ຂອງຂ້າພະເຈົ້າຢູ່ໃນລະວ່າງ 50 ປີ ຕໍ່ມາບໍ່ພໍເທົ່າໃດປີ ພໍ່ຂອງຂ້າພະເຈົ້າໄດ້ເສັຽຊີວິດໄປໃນຕອນທີ່ເພິ່ນຍັງຢູ່ໃນຄວາມມືດ ( ຍັງບໍ່ທັນຮູ້ຈັກພຣະເຈົ້າ ). ໃນຂະນະທີ່ຂ້າພະເຈົ້າຂັບຣົດພາແມ່ກັບໄປເຮືອນທີ່ຫວ້າງເປົ່າງຽບເຫງົາຂອງເພິ່ນ, ໃນມື້ນັ້ນ ພໍດີຕາເວັນພວມຂຶ້ນແລະສ່ອງແສງເຂົ້າມາໃນໂລກ ແຕ່ແມ່ຂອງຂ້ອຍບໍ່ເປັນແບບນັ້ນ, ເພິ່ນເວົ້າວ່າ: ບໍ່ມີຜູ້ໃດຊິຊ່ອຍຂ້ອຍອີກແລ້ວ, ຂ້ອຍບໍ່ມີຄວາມຫວັງ ແລະຂ້ອຍກໍມີຄວາມຮູ້ສຶກຊີວິດຂອງຂ້ອຍໄດ້ສິ້ນສຸດລົງທັງເປັນ". ຫລາຍເດືອນຜ່ານໄປເພິ່ນໄດ້ເລີ້ມຕົ້ນເດີນທາງໃນຄວາມເຊື່ອ ແລະພຣະເຈົ້າກໍປະທານພຣະວິນຍານບໍຣິສຸດເຂົ້າມາສະຖິດນຳພາເພິ່ນ ແລະເພິ່ນກໍຮັບໃຊ້ພຣະອົງດ້ວຍຄວາມເຊື່ອຂອງເພິ່ນໄປອີກ

ເຕັມ 42 ປີ.

**ຄຳຖາມ:** 1. ຄົນສ່ວນຫລາຍຮູ້ສຶກຢ່າງໃດໃນເມື່ອເຫດການນີ້ເກີດຂຶ້ນກັບເຂົາເຈົ້າ?

2. ພຣະເຢຊູໄດ້ຊົງເຮັດຫຍັງເພື່ອພວກເຮົາ?

**ອະທິບາຍ:** ບົດຮຽນໃນວັນນີ້ຈະໃຫ້ຄຳແນະນຳພວກເຮົາໃຫ້ຍອມຮັບ ແລະໃຫ້ຄວາມຫວັງຂອງພວກເຮົາຕັ້ງໝັ້ນຄົງຢູ່ໃນການດຳເນີນຊີວິດໃນຄວາມເຊື່ອໃນພຣະອົງຕໍ່ໄປ.

## 1. <u>ໃນເຫດການຂອງຄວາມໂສກເສົ້າເສັຽໃຈ:</u> ( ໂຢຮັນ 11:1-3,6-7)

1) ຂໍໃຫ້ນັກຮຽນອາສາອ່ານ ໂຢຮັນ 11:1-3,6-7

2) **ຄຳຖາມ:** ເອື້ອຍຂອງລາຊະໂຣໃຊ້ຄົນໄປທູນຕໍ່ພຣະເຢຊູວ່າຢ່າງໃດ? ທ່ານຄິດວ່າເມື່ອພຣະເຢຊູໄດ້ຍິນແລ້ວ, ເຂົາເຈົ້າຫວັງວ່າພຣະເຢຊູຈະຊົງປະທຸກສິ່ງໄວ້ແລະແລ່ນມາຊ່ອຍເຂົາເຈົ້າໃນເຫດການນີ້ໂລດບໍ? ແຕ່ພຣະເຢຊູໄດ້ຊົງເຮັດຢ່າງໃດກັບເຂົາເຈົ້າ?

3) **ອະທິບາຍ:** ພວກເອື້ອຍຂອງລາຊະໂຣໄດ້ເຮັດກິນຖ້າພຣະເຢຊູມື້ທີສອງໃກ້ຈະຜ່ານໄປ, ແຕ່ບໍ່ຮູ້ວ່າພຣະອົງຈະມາເມື່ອໃດ ຫລືວ່າພຣະອົງຈະບໍ່ມາເລີຍ. ແຕ່ເຂົາເຈົ້າກໍໄດ້ລໍຄອຍເຖິງສອງມື້.

4) **ຄຳຖາມ:** ທ່ານຄິດວ່າມີຫຍັງທີ່ເຂົ້າມາໃນຄວາມຄິດຂອງເຂົາເຈົ້າໃນຂະນະທີ່ລໍຄອຍມາຫລາຍມື້ນັ້ນ? ໃນກໍຣະນີນີ້ໄດ້ເຮັດໃຫ້ຄວາມຄິດຂອງທ່ານສັບສົນຮູ້ສຶກຈະໝົດຫວັງຢູ່ບໍ່?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ໂຢຮັນ 11:1-3,6-7

1. ພວກເຮົາໄດ້ຮຽນຫຍັງແດ່ຈາກສອງເອື້ອຍນ້ອງນີ້ ແລະພວກເຮົາຈະເຮັດແນວໃດໃນເມື່ອບັນຫານີ້ເກີດຂຶ້ນກັບພວກເຮົາ?
2. ພຣະເຢຊູໄດ້ຊົງເຮັດຫຍັງໃນເມື່ອໄດ້ຍິນຄຳທູນຂໍຂອງຜູ້ຍິງນັ້ນແລ້ວ?
3. ພະລັງອຳນາດຂອງພຣະເຢຊູທີ່ເໜືອກວ່າຄວາມເປັນຄວາມຕາຍນັ້ນ ຖ່ວງເວລາຄວາມຕ້ອງການຂອງຄອບຄົວນັ້ນເປັນເພາະຄວາມເຊື່ອຂອງເຂົາເຈົ້າບໍ?
4. ພວກເຮົາຈະເຮັດແນວໃດ ໃນເມື່ອການລໍຄອຍທີ່ບໍ່ມີວີ່ແວວ, ພວກເຮົາຈະເອົາຄວາມໝົດຫວັງມາເປັນບັນຫາໃຫຍ່ຂອງພວກເຮົາບໍ?

## 2. <u>ຄວນຈະ...ສາມາດຈະ...ອາດຈະ:</u> ( ໂຢຮັນ 11:20-27 )

1) ຂໍໃຫ້ນັກຮຽນອາສາອ່ານພຣະທັມ ໂຢຮັນ 11:20-27

2) ຄຳເວົ້າຂອງນາງມາທາທີ່ທູນຕໍ່ພຣະເຢຊູນັ້ນໄດ້ສະທ້ອນເຖິງຄົນທີ່ເວົ້າ ຫລືຄິດໃນເວລາທີ່ຖືກວິບັດແບບນີ້ມາທຳລາຍ.

3) **ອະທິບາຍ:** ນາງມາທາຍັງຍຶດໝັ້ນໃນຄວາມເຊື່ອທັ້ງໆ ທີ່ລາວຢູ່ໃນສະພາວະຄວາມໂສກເສົ້າ ແລະຄວາມຜິດຫວັງ, ນີ້ເປັນຕົວຢ່າງທີ່ດີໃຫ້ແກ່ພວກເຮົາ.

4) **ຄຳຖາມ:** ເປັນຫຍັງພຣະເຢຊູຈຶ່ງຖາມໃຫ້ນາງມາທາເຊື່ອໃນພຣະອົງ ກ່ອນທີ່ພຣະອົງຈະໃຫ້ນາງທາເຫັນການມະຫັສຈັນ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ( ໂຢຮັນ 11:20-27 )

1. ນາງມາທາໄດ້ເວົ້າກັບພຣະເຢຊູຄຳທຳອິດທີ່ນາງອອກໄປຕ້ອນຮັບພຣະອົງນັ້ນວ່າແນວໃດ? ເປັນຫຍັງ?( ຂໍ້ 21 )
2. ນາງມາທາເຊື່ອການຟື້ນພຣະຊົນ ແລະການໂສກເສົ້ານັ້ນຢ່າງໃດ?
3. ຄຳເວົ້າຂອງນາງມາທາຕັ້ງແຕ່ເລີ້ມແຮກເຖິງສຸດທ້າຍໄດ້ສະທ້ອນໃຫ້ທ່ານສັງເກດເຫັນຫຍັງແດ່?
4. ເຫດຜົນທີ່ປ່ຽນແປງນັ້ນເພື່ອຫຍັງ
5. ພວກເຮົາຈະຕ້ອງເຮັດຢ່າງໃດໃນເມື່ອສິ່ງເຫລົ່ານີ້ຫາກບໍ່ເກີດຜົນຕາມທາງທີ່ເຮົາປະສົງ?

**<u>3. ຊີວິດ ແລະຄວາມຫວັງໄດ້ຮັບກັບຄືນມາແລ້ວ:</u>** ( ໂຢຮັນ 11:38-40,43-44 )

1) ຂໍໃຫ້ນັກຮຽນອາສາອ່ານ ໂຢຮັນ 11:39-40,43-44

2) ໃນຂໍ້ທີ 39 ບໍ່ໄດ້ໃຫ້ເຫດຜົນຕໍ່ນາງມາທາ. ໜູນໃຈນັກຮຽນໃສ່ຊື່ກ້ອນຫີນທີ່ຕ້ອງການຍົກອອກຈາກຜູ້ທີ່ເຊື່ອ ແລ້ວມາດຳເນີນຊີວິດຢູ່ໃນພຣະເຢຊູຜູ້ທີ່ຊົງຄວາມສາມາດ:

3) **ອະທິບາຍ:** ເຊັ່ນຕົວຢ່າງ " ການງານ, ຄວາມຢ້ານກົວ, ຄວາມໂມໂຫ ແລະການບໍ່ເຊື່ອຟັງ "

4) **ຄຳຖາມ:** ເປັນຫຍັງພຣະອົງຈຶ່ງບໍ່ຍົກຫີນນັ້ນອອກໃຫ້ພວກເຮົາ?

5) ນາງມາທາເວົ້າຕອບໄປວ່າຢ່າງໃດ?

6) ພຣະເຢຊູກ່າວວ່າຢ່າງໃດ? ( ຂໍ້ທີ 40 )

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ໂຢຮັນ 11:38-40,43-44

1. ທ່ານສັງເກດເຫັນຄວາມເຊື່ອຂອງນາງມາທາທີ່ກັບໄປ ກັບມາເປັນແບບໃດ?
2. ເປັນເພາະເຫດໃດພຣະເຢຊູຈຶ່ງອະທິຖານອອກສຽງແຮງ?
3. ພວກເຮົາຈະນຳພຣະກຽດມາສູ່ພຣະອົງດ້ວຍການອະທິຖານຂອງພວກເຮົາຢ່າງໃດ?
4. ເປັນຫຍັງພຣະເຢຊູຈຶ່ງບໍ່ເຮັດໃຫ້ກ້ອນຫີນນັ້ນຫາຍອອກໄປ ໂດຍບໍ່ຕ້ອງໃຫ້ຄົນມີສ່ວນກ່ຽວຂ້ອງ?

**<u>ສລຸບ</u>:**

1. ສຳລັບຜູ້ທີ່ມີຄວາມເຊື່ອແລ້ວ, ການຕາຍຝ່າຍເນື້ອໜັງນັ້ນເປັນຂັ້ນຈຸດ ( , ) ບໍ່ແມ່ນຈ້ຳເມັດ ( . )
2. ຂໍ້ຄິດ " ຖ້າພວກເຮົາຂຽນວ່າ **ເທົ່ານັ້ນແຫລະ.** ຈະມີຫຍັງເກີດຂຶ້ນໃນເມື່ອເຮົາໃສ່ຈ້ຳເມັດລົງທ້າຍຂໍ້ຄວາມນັ້ນ.
3. ພວກເຮົາຈະໃຫ້ຄວາມຫວັງຂອງພວກເຮົາດຳເນີນໄປແນວໃດ?

**ບົດຮຽນແຫ່ງຄວາມຈິງ**

- ພຣະເຈົ້າບໍ່ໄດ້ທົດສອບມະນຸດຈາກສະຖານນະການຂອງຄວາມໂສກເສົ້າໝົດຫວັງເລີຍ.
- ອັນທີສອງ - ການເຊື່ອວ່າພຣະເຈົ້າຊົງກະທຳຫລືບໍ່ທຳນັ້ນ ເປັນການທະນົງຕົນ ແລະສາມາດເຮັດໃຫ້ຄວາມເຊື່ອຂອງພວກເຮົາພິການໄດ້.
- ຖ້າຫາພວກເຮົາດຳເນີນເດີນໄປດ້ວຍຄວາມເຊື່ອຜ່ານຜ່າໃນເວລາມີອັນຕະລາຍໄດ້, ພຣະເຈົ້າຈະຟື້ນຟູຄວາມຫວັງຂອງພວກເຮົາ ແລະໃຫ້ການດຳເນີນຊີວິດຂອງພວກເຮົາມີຄຸນຄ່າ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )